ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ **1265**/ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ **17 ກັນຍາ 2018**

# <u>ແຈ້ງການ</u>

**ເຖິງ:** ທ່ານຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ເພີ່ມທະວີການຄຸ້ມຄອງການເກັບຊື້ເຂົ້າກິນ ແລະ ລາຄາຊື້-ຂາຍເຂົ້າ ຕາມທ້ອງຕະຫຼາດຢູ່ພາຍໃນແຂວງ.

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
- ອີງຕາມ ສະພາບດິນຟ້າອາກາດໄດ້ມີການປ່ຽນແປງພາຍໃນປະເທດ ໃນປະຈຸບັນ.

ປະເພດເຂົ້າກິນແມ່ນນອນຢູ່ໃນລາຍການສິນຄ້າຄວບຄຸມຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ທີ່ໄດ້ກໍານົດໄວ້ຕາມດໍາລັດ 474/ນຍ ແລະ ຕ້ອງດູນດ່ຽງໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມພາຍໃນປະເທດ, ຊຶ່ງປະຈຸບັນນີ້ ສະພາບດິນຟ້າອາກາດໄດ້ມີການປ່ຽນແປງ ອັນສົ່ງຜົນກະທົບໃຫ້ເກີດສະພາບການທາງທໍາມະຊາດຢ່າງຕໍ່ເນື່ອງ ເຊັ່ນ: ໄພນໍ້າຖ້ວມ, ແຜ່ນດິນໄຫວ, ໄຟໄໝ້ຢູ່ຫຼາຍຂົງເຂດໃນໂລກ ແລະ ພາກພື້ນທີ່ຫຼີກລ້ຽງບໍ່ໄດ້, ປະເທດລາວເຮົາກໍເປັນປະເທດໜຶ່ງທີ່ໄດ້ຮັບຜົນກະທົບໄພພິບັດນໍ້າຖ້ວມຢ່າງໜັກໃນຫຼາຍຂົງເຂດທົ່ວປະເທດ.

ເພື່ອຮັກສາສະຖຽນລະພາບທາງດ້ານເສດຖະກິດໃຫ້ໝັ້ນຄົງ, ບໍ່ໃຫ້ມີຜົນກະທົບໄປສູ່ບັນຫາອື່ນທີ່ຈະກາຍເປັນການຫຍໍ້ທໍ້ໃນສັງຄົມ, ຫຼີກເວັ້ນການສວຍໂອກາດເອົາສະພາບດັ່ງກ່າວ ກັກຕຸນສິນຄ້າເພື່ອຂຶ້ນລາຄາເວົ້າລວມ, ເວົ້າສະເພາະສິນຄ້າປະເພດເຂົ້າ, ເຮັດໃຫ້ມີການປັ່ນປ່ວນ ເພື່ອຫາຜົນປະໂຫຍດໂດຍບໍ່ເປັນທໍາ ຊຶ່ງຈະນໍາໄປເຖິງເຮັດໃຫ້ເກີດມີສະພາບຂາດແຄນສະບຽງອາຫານ. ເນື່ອງຈາກວ່າ, ໃນປະຈຸບັນໄດ້ເກີດມີສະພາບພໍ່ຄ້າມີກາງຈາກຕ່າງປະເທດໄດ້ເຂົ້າມາເກັບຊື້ເຂົ້ານໍາຊາວນາຜູ້ທີ່ເຮັດການຜະລິດເຂົ້າໂດຍພະລາການ ເພື່ອສົ່ງອອກໄປຕ່າງປະເທດ ແລະ ໄດ້ມີການເກັ່ງລາຄາເຂົ້າສູງກວ່າລາຄາຊື້-ຂາຍຕົວຈິງ ຊຶ່ງມັນໄດ້ສົ່ງຜົນກະທົບອັນບໍ່ຊອບທໍາໃຫ້ແກ່ບັນດາຫົວໜ່ວຍທຸລະກິດທີ່ໄດ້ເຮັດພັນທະໃຫ້ລັດຖະບານ ເຊັ່ນ: ພັນທະໃຫ້ແກ່ທະຫານ, ຕໍາຫລວດ, ພັນທະໃຫ້ແກ່ອົງການຈັດຕັ້ງສາກົນ ທີ່ເຂົ້າມາຊ່ວຍເຫຼືອເຂດຫ່າງໄກສອກຫຼີກທີ່ຂາດແຄນທາງດ້ານສະບຽງອາຫານ (ເຂົ້າກິນ), ພັນທະການເກັບຊື້ເຂົ້າໄວ້ເປັນຄັງແຮຂອງລັດຖະບານ ແລະ ບັນຫາອື່ນໆ ເຮັດໃຫ້ບໍ່ສາມາດແຂ່ງຂັນລາຄາເກັບຊື້ເຂົ້າກັບພໍ່ຄ້າມີກາງຈາກຕ່າງປະເທດໄດ້. ສະນັ້ນ, ເພື່ອສະກັດກັ້ນການປັ່ນປ່ວນລາຄາເຂົ້າຂອງຊາວຕ່າງປະເທດທີ່ເຂົ້າມາເກັບຊື້ເຂົ້າ ແລະ ຮັບປະກັນການດູນດ່ຽງເຂົ້າກິນພາຍໃນປະເທດ;

**ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ຈຶ່ງແຈ້ງມາຍັງທ່ານຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະຕິບັດດັ່ງນີ້:**

1. ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມ-ກວດກາ ຢ່າງເຂັ້ມງວດ ຫ້າມເດັດຂາດບໍ່ໃຫ້ພໍ່ຄ້າຊາວຕ່າງປະເທດເຂົ້າມາເກັບຊື້ເຂົ້າຢູ່ພາຍໃນແຂວງ ແລະ ປັ່ນປ່ວນລາຄາເຂົ້າ ໂດຍບໍ່ມີໃບທະບຽນ

ວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ. ຖ້າພົບເຫັນໃນກໍລະນີມີການລະເມີດດັ່ງກ່າວແມ່ນໃຫ້ຍຶດ ຫຼື ອາຍັດ ແລະ ປັບໃໝຕາມລະບຽບກົດໝາຍວາງອອກ;

2. ໃຫ້ເອົາໃຈໃສ່ຄຸ້ມຄອງລາຄາຊື້-ຂາຍ (ປະເພດເຂົ້າກິນທຸກຊະນິດ) ຕາມທ້ອງຕະຫຼາດຢູ່ພາຍໃນແຂວງຂອງຕົນ, ຫຼີກລ້ຽງການສວຍໂອກາດຂຶ້ນລາຄາໂດຍພະລາການ, ກ່ອນຈະຂຶ້ນລາຄາ ຕ້ອງໄດ້ຮັບການອະນຸຍາດຈາກຄະນະຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຂັ້ນແຂວງ ແລະ ຂັ້ນເມືອງ, ເນື່ອງຈາກວ່າ, ສິນຄ້າປະເພດເຂົ້າກິນແມ່ນນອນຢູ່ໃນລາຍການສິນຄ້າຄວບຄຸມລາຄາ ຕາມບັນຊີ (ກ) ຂອງຂະແໜງອຸດສາຫະກຳ ແລະ ການຄ້າ;

3. ຫ້າມບໍ່ໃຫ້ບຸກຄົນ, ຫົວໜ່ວຍທຸລະກິດ ຫຼື ໂຮງສີຕ່າງໆ ຢູ່ພາຍໃນແຂວງ ເປັນຕົວແທນເກັບຊື້ເຂົ້າໃຫ້ຊາວຕ່າງປະເທດ ໂດຍອາໃສໃບທະບຽນວິສາຫະກິດຂອງຄົນລາວ ຫຼື ເອົາເງິນທຶນໃຫ້ ເພື່ອເກັບຊື້ ແລະ ກັກຕຸນສິນຄ້າ, ສ້າງຄວາມປັ່ນປ່ວນທາງດ້ານລາຄາຊື້-ຂາຍເຂົ້າ, ຖ້າພົບເຫັນການກະທຳດັ່ງກ່າວແມ່ນໃຫ້ຍຶດ ຫຼື ອາຍັດ ແລະ ປັບໃໝ ຕາມລະບຽບກົດໝາຍຂອງ ສປປ ລາວ ວາງອອກຢ່າງເຂັ້ມງວດ;

4. ຜູ້ທີ່ມີສິດເກັບຊື້ເຂົ້າຈາກຊາວນາ ຫຼື ກຸ່ມຊາວນາໄດ້ ຕ້ອງແມ່ນສະມາຄົມ/ກຸ່ມໂຮງສີ ຫຼື ທຸລະກິດຊື້-ຂາຍເຂົ້າ ທີ່ມີໃບທະບຽນໂດຍຖືກຕ້ອງເທົ່ານັ້ນ. ສະນັ້ນ, ຖ້າແຂວງໃດບໍ່ທັນມີ ກໍໃຫ້ເປັນເຈົ້າການຮີບຮ້ອນຈັດຕັ້ງກຸ່ມ ຫຼື ສະມາຄົມດັ່ງກ່າວຂຶ້ນ; ສ່ວນການເກັບຊື້ເຂົ້າຂອງພາກສ່ວນຕ່າງໆ ເຊັ່ນ: ການເກັບຊື້ເຂົ້າຂອງສອງກຳລັງ (ປກສ-ປກຊ), ອົງການຈັດຕັ້ງສາກົນຕ່າງໆ ແລະ ທຸກຮູບແບບການເກັບຊື້ແມ່ນຕ້ອງພົວພັນຊື້ນຳກຸ່ມໂຮງສີ ຫຼື ສະມາຄົມ ໂຮງສີຂອງແຂວງໂດຍກົງ, ບົນພື້ນຖານການຄຸ້ມຄອງ ແລະ ຢັ້ງຢືນຈາກພະແນກອຸດສາຫະ ກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ທັງນີ້ກໍເພື່ອໃຫ້ຂະແໜງການສາມາດເກັບກຳໄດ້ສະພາບຄວາມເປັນຈິງຂອງລາຄາ ແລະ ການຊື້-ຂາຍເຂົ້າຢູ່ພາຍໃນແຂວງຂອງຕົນ;

5. ໃຫ້ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ເທດສະບານ ບົນພື້ນຖານປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນການດຸ່ນດ່ຽງເຂົ້າກິນພາຍໃນທ້ອງຖິ່ນຂອງຕົນ;

6. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ນ ເຂັມມະນີ ພົນເສນາ

ບ່ອນນຳສົ່ງ:

- ຫ້ອງວ່າການສູນກາງພັກ (ເພື່ອຮັບຊາບ);
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ເພື່ອຮັບຊາບ);
- ຄະນະນຳກະຊວງ ອຄ (ເພື່ອຮັບຊາບ);
- ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ);
- ພະແນກ ອຄ ແຂວງ, ນະຄອນຫຼວງ (ເພື່ອຈັດຕັ້ງປະຕິບັດ);
- ຫ້ອງການ, ສະຖາບັນ ແລະ ບັນດາກົມ ອ້ອມຂ້າງກະຊວງ ອຄ (ເພື່ອຮັບຊາບ);
- ສຳເນົາ.